# ບັນດາເຂື່ອນຕ່າງໆ ຂອງ ຜ-ຟຟລ ຍັງປອດໄພ ຈາກແຜ່ນດິນໄຫວ

ບັນດາເຂື່ອນຕ່າງໆບໍລິສັດ ຜະລິດ-ໄຟຟ້າ ລາວມະຫາຊົນ (ຜ-ຟຟລ) ໃນເບື້ອງຕົ້ນ ຍັງບໍ່ໄດ້ຮັບຜົນກະທົບຈາກແຜ່ນດິນໄຫວ ເຊິ່ງເກີດຂຶ້ນໃນຕອນເຊົ້າຂອງວັນທີ 21 ພະຈິກ 2019, ໃນຂອບເຂດ ສປປລາວ ໃນຈໍານວນ 18 ຄັ້ງ, ເຊິ່ງຄັ້ງທີ 2 ມີຄວາມແຮງ 5.9 ຣິກເຕີ ໃນເວລາ 04ໂມງ 03 ນາທີ, ຄັ້ງທີ 17 ມີຄວາມແຮງ 6.4 ຣິກເຕີ ເວລາ 06 ໂມງ 50 ນາທີ ຢູ່ເມືອງຫົງສາ ແຂວງໄຊຍະບູລີ ແລະ ຮູ້ສຶກ ສັ່ນສະເທືອນໃນບັນດາແຂວງ ພາກເໜືອ ຈົນເຖິງນະຄອນຫຼວງວຽງຈັນ. (ອີງຕາມໃບແຈ້ງການ ສະບັບເລກທີ 1661/ກອຕທ, ກົມອຸຕຸນິຍົມ ແລະ ອຸທົກກະສາດ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ)

- ໂຄງການເຂື່ອນໄຟຟ້ານໍ້າຄານ 2 ເຊິ່ງເປັນໜຶ່ງໃນໂຄງການ ທີ່ ຜ-ຟຟລ ເປັນຜູ້ຄຸ້ມຄອງ ຍັງບໍ່ມີລາຍງານ ຄວາມເສຍຫາຍຈາກຜົນກະທົບຈາກເຫດແຜ່ນດິນໄຫວໃນຄັ້ງນີ້ ໂດຍ ທ່ານ ທະວີສິດ ຈັນທະຣີ ຮອງຜູ້ອໍານວຍການເຂື່ອນ ໄຟຟ້ານໍ້າຄານ 2-3 ກ່າວໃນ ຕອນເຊົ້າ ຂອງວັນທີ 21 ນີ້ວ່າ: ປັດຈຸບັນ ຍັງບໍ່ທັນກວດພົບ ຄວາມເສຍຫາຍ ຫຼື ສິ່ງ ຜິດປົກກະຕິ ໃດໆ ຂອງເຂື່ອນ ໄຟຟ້ານໍ້າຄານ 2-3 ໂດຍເຂື່ອນ ທັງສອງ ແຫ່ງນີ້ ໄດ້ກວດສອບເບື້ອງຕົ້ນ ດ້ານໂຄງສ້າງເບຕົງ, ເຂື່ອນ ກັ້ນນໍ້າ, ປະຕູລະບາຍນໍ້າ ແລະ ອື່ນໆ. ເຖິງຢ່າງໃດກໍ່ຕາມ ທ່ານ ຮອງຜູ້ອໍານວຍການເຂື່ອນຈະໄດ້ກວດສອບຄວາມລະອຽດເພີ່ມຕື່ມໃນຂັ້ນຕໍ່ໄປ.
- ເຂື່ອນ ໄຟຟ້ານໍ້າງື່ມ -1 ເຊິ່ງເປັນໜຶ່ງໃນບັນດາເຂື່ອນ ທີ່ ຜ-ຟຟລ ເປັນຜູ້ຄຸ້ມຄອງ ກໍ່ຍັງບໍ່ໄດ້ຮັບຄວາມເສຍຫາຍຈາກແຜ່ນດິນໄຫວໃນຄັ້ງນີ້ ໂດຍ ທ່ານ ສີຣິພົມ ແສງອ່ອນແກ້ວ ຜູ້ອໍານວຍການເຂື່ອນ ໄຟຟ້ານໍ້າງື່ມ -1 ໄດ້ກ່າວ ໃນຕອນເຊົ້າ ຂອງວັນທີ 21 ພະຈິກ ປີ 2019 ວ່າ: ເຂື່ອນໄດ້ກວດສອບ ສະພາບ ເຮືອນຈັກ, ສັນເຂື່ອນ ເບື້ອງຕົ້ນ ແລ້ວແຕ່ຍັງບໍ່ທັນເຫັນສະພາບຄວາມເສຍຫາຍໃດໆ ເທື່ອ ເຊິ່ງຍັງຈະຕ້ອງກວດສອບ ລາຍລະອຽດເພີ່ມຕື່ມ.

ນອກຈາກເຂື່ອນ ໃຫຍ່ທັງສອງໂຄງການ ຂອງ ຜ-ຟຟລ ທີ່ຕັ້ງຢູ່ພາກເໜືອ ແລະ ພາກກາງຂອງປະເທດລາວແລ້ວ ເຂື່ອນອື່ນໆ ທີ່ ຜ-ຟຟລ ເປັນຜູ້ຄຸ້ມຄອງ ຍັງບໍ່ທັນມີລາຍງານຄວາມເສຍຫາຍ ເຊັ່ນ: ເຂື່ອນ ໄຟຟ້ານໍ້າສະນາ, ເຂື່ອນ ໄຟຟ້າ ນໍ້າມັງ3, ເຂື່ອນ ໄຟຟ້ານໍ້າຊອງ, ເຂື່ອນ ໄຟຟ້ານໍ້າເລີກ. ສໍາລັບບັນດາເຂື່ອນໄຟຟ້າທີ່ຢູ່ທາງພາກໃຕ້ເຊັ່ນ: ເຂື່ອນ ໄຟຟ້າ ເຊເສັດ 1-2 ເຂື່ອນໄຟຟ້າ ແຊລະບໍາ, ເຂື່ອນໄຟຟ້າຫ້ວຍລໍາພັນໃຫຍ່ ກໍ່ໄດ້ລາຍງານວ່າບໍ່ໄດ້ຮັບຄວາມເສຍຫາຍຈາກເຫດແຜ່ນດິນໄຫວໃນຄັ້ງນີ້.